ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານໜອງຄັນຄູ ເມືອງນາຊາຍທອງ
ແຂວງນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ 030-988-2809

ເລກທີ: 073/ລອທ
ນະຄອນຫຼວງວຽງຈັນ,ເລກທີ: 25 MAY 2026

ແຜນປັບປຸງແກ້ໄຂ ການດ້ອຍຄ່າຂອງທຶນ

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື.

ເລື່ອງ: ນຳສົ່ງແຜນປັບປຸງແກ້ໄຂການດ້ອຍຄ່າຂອງທຶນ ບໍລິສັດ ລາວອາໂກຣເທັກ ມະຫາຊົນ.

- ອີງຕາມ ລະບຽບວ່າດ້ວຍການຈົດທະບຽນຊົນ(ສະບັບປັບປຸງ) ເລກທີ 007/23 ຕລຊລ, ລົງວັນທີ 12 ກັນຍາ 2023. ມາດຕາ 26.
- ອີງຕາມ ໜັງສື ແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະບັບ ເລກທີ 603/ຕລຊລ, ລົງວັນທີ 07 ພຶດສະພາ 2026.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ຮັບໜັງສືແຈ້ງການນຳສົ່ງການຮັກສາສະຖານະພາບການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ(ສ້າງແຜນປັບປຸງແກ້ໄຂ ການດ້ອຍຄ່າຂອງທຶນ). ສະບັບເລກທີ 603/ຕລຊລ, ລົງວັນທີ 07 ພຶດສະພາ 2026. ບໍລິສັດມີຄວາມຍິນດີເປັນຢ່າງຍິ່ງທີ່ຈະໃຫ້ຄວາມຊີ້ແຈງເຖິງແຜນປັບປຸງການແກ້ໄຂການ ການການດ້ອຍຄ່າຂອງທຶນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ໃຫ້ກັບຄະນະກຳມະການຄຸ້ມຄອງຫຼັກຊັບລາວ ແລະ ຕະຫຼາດຫຼັກຊັລລາວ.

I. ສາເຫດ ແລະ ຜົນກະທົບ ທີ່ເຮັດໃຫ້ບໍລິສັດຂາດທຶນ

ໃນປີ 2025 ທີ່ຜ່ານມາ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ຮັບຜົນກະທົບຈາກສະພາບອາກາດ ເກີດໄພແຫ້ງແລ້ງ, ອີກທັ້ງບໍລິສັດຍັງໄດ້ສູນເສຍພື້ນທີ່ປູກປາມຂອງຊາວກະສິກອນທີ່ເປັນລູກສວນບາງສ່ວນໄດ້ທຳຂາຍທີ່ດິນ ແລະ ມີການຍຶດຈາກພື້ນທີ່ລວມບ້ານໄປປູກພືດຊະນິດອື່ນ ເຊັ່ນ: ສວນກ້ວຍເປັນຕົ້ນ. ຈຶ່ງເຮັດໃຫ້ການຜະລິດຫຼຸດລົງ ແລະ ບໍ່ພຽງພໍຕໍ່ຄວາມຕ້ອງການໃນທ້ອງຕະຫຼາດ. ບໍລິສັດ ຈຶ່ງມີຄວາມຈຳເປັນຕ້ອງໄດ້ນຳວັດຖຸດິບຈາກພາຍນອກເພື່ອນຳເຂົ້າມາຕອບສະໜອງພາຍໃນ. ຍ້ອນສາເຫດນັ້ນຈຶ່ງສົ່ງຜົນກະທົບໃຫ້ບໍລິສັດຂາດທຶນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ຮັບຜົນກະທົບຈາກ ສະພາວະອັດຕາແລກປ່ຽນ, ລາຄາຕົ້ນທຶນຂອງ ສິນຄ້ານຳເຂົ້າສູງຂຶ້ນ, ຜົນຜະລິດຫຼຸດລົງ. ເນື່ອງຈາກໃນຊຸມປີທີ່ຜ່ານມາຊາວສວນປາມໄດ້ພົບກັບສະພາບອາກາດ ແຫ້ງແລ້ງ, ຂາດແຄນນ້ຳ, ການດູແລ ແລະ ບຳລຸງຮັກສາບໍ່ພຽງພໍຕໍ່ຄວາມຕ້ອງການຂອງຕົ້ນປາມ. ດັ່ງນັ້ນ, ຈຶ່ງເປັນ ສາເຫດທີ່ສົ່ງຜົນກະທົບໂດຍຕົງຕໍ່ຍອດຂາຍ ແລະ ຜົນຜະລິດທີ່ຫຼຸດລົງ.

II. ວິທີແກ້ໄຂທີ່ສົ່ງຜົນໃຫ້ ບໍລິສັດ ຂາດທຶນ

ຜູ້ອຳນວຍການ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ບໍ່ໄດ້ນິ່ງນອນໃຈຕໍ່ກັບສະພາບບັນຫາທີ່ເກີດຂຶ້ນແຕ່ ຢ່າງໃດ ໂດຍໄດ້ປຶກສາຫາລືເພື່ອຫາແນວທາງແກ້ໄຂກັບບັນຫາທີ່ເກີດຂຶ້ນ. ເພື່ອກອບກູ້ສະພາບ, ສະຖານະການທີ່ດີຂຶ້ນ ຈາກເດີ່ມ, ບໍລິສັດ ໄດ້ເນັ້ນໃສ່ການຜັກດັນ ແລະ ສົ່ງເສີມໃຫ້ຊາວສວນປາມປູກພາຍໃນປະເທດພ້ອມທັງເອົາໃຈໃສ່ໃນ ການດູແລ ແລະ ບຳລຸງຮັກສາ. ເພື່ອຟື້ນຟູຜົນຜະລິດທີ່ຈະໄດ້ຮັບໃນປີຕໍ່ໄປ ແລະ ສົ່ງອອກນອກປະເທດໃນອານາຄົດ.

ນອກນັ້ນ, ບໍລິສັດ ຍັງໄດ້ເຂັ້ມງວດໃນການຄວບຄຸມການຜະລິດພາຍໃນເຊັ່ນ: ການຄັດສັນຄຸນພະພາບຂອງ ວັດຖຸດິບທີ່ນຳມາໃຊ້ໃນອຸດສາຫະກຳ ເພື່ອໃຫ້ມີຄຸນນະພາບໃນການຜະລິດ. ບໍລິສັດ ຫ້ວງຢ່ານຍິ່ງວ່າວ່າທາງຕະຫຼາດຫຼັກ ຊັບລາວ ໄດ້ຮັບການຊີ້ແຈ້ງຄວາມຊັດເຈນຕໍ່ແຜນປັບປຸງແກ້ໄຂການຂາດທຶນຂອງ ບໍລິສັດ ແລະ ໄດ້ຮັບຄວາມເຂົ້າໃຈຕໍ່ ກັບບັນຫາທີ່ເກີດຂຶ້ນຂອງ ບໍລິສັດ ດ້ວຍ.

- ປະລິມານການຈຳໜ່າຍ ໃນປີ 2026
  - ນ້ຳມັນປາມດິບ 69,000 ລ້ານກີບ
  - ກາກປາມ 3,500 ລ້ານກີບ
  - ປຸ໋ຍ 3,000 ລ້ານກີບ
  - ຕົ້ນກ້າ 1,500 ລ້ານກີບ
  - **ລວມ 77,000 ລ້ານກີບ**

- ❖ ບໍລິສັດຈະສືບຕໍ່ແຜນການດຳເນີນທຸລະກິດ
  - ບໍລິສັດຄາດຄະເນການຂາຍ CPO: ໂດຍອີງໃສ່ຄວາມສາມາດໃນການຜະລິດຂອງພວກເຮົາ ແລະ ຄວາມ ຕ້ອງການຂອງຕະຫຼາດໃນປະຈຸບັນ. ນອກຈາກນັ້ນ, ພວກເຮົາໄດ້ສ້າງນະໂຍບາຍທີ່ຊັດເຈນເພື່ອຂະຫຍາຍ ຖານລູກຄ້າຂອງພວກເຮົາຕະຫຼອດປີ 2026.
  - ແຜນການຂາຍກາກປາມ: ການຄາດຄະເນການຂາຍກາກປາມແມ່ນໄດ້ຮັບແຮງຂັບເຄື່ອນໂດຍແນວໂນ້ມ ການຊື້ຂອງຜູ້ບໍລິໂພກໃນປະຈຸບັນ. ຄ້າຍຄືກັນກັບ CPO, ບໍລິສັດມີຄວາມມຸ່ງໝັ້ນທີ່ຈະຂະຫຍາຍເຄືອ ຂ່າຍລູກຄ້າຂອງພວກເຮົາໃນປີ 2026.
  - ແຜນການຂາຍປຸ໋ຍ: ສຳລັບປີ 2026, ບໍລິສັດໄດ້ເປີດຕົວໂຄງການເພື່ອສົ່ງເສີມການນຳໃຊ້ປຸ໋ຍປາມທີ່ເພີ່ມ ຂຶ້ນໃນບັນດາກຳລັງແຮງງານພາຍໃນ ແລະ ຊາວກະສິກອນຕາມສັນຍາພາຍນອກ.

- ແຜນການຂາຍເບ້ຍປາມ: ບໍລິສັດກຳລັງຢູ່ໃນຂັ້ນຕອນການຂໍໃບຢັ້ງຢືນຢ່າງເປັນທາງການສຳລັບແມ່ພັນປາມ 'ລາວວຽງ' ເພື່ອອຳນວຍຄວາມສະດວກໃນການສົ່ງອອກໃນອະນາຄົດ. ການຄາດຄະເນການຂາຍຈະມີຄວາມກ່ຽວຂ້ອງໂດຍກົງກັບປະລິມານການຜະລິດທັງໝົດທີ່ສ້າງຂຶ້ນໃນປີ 2026.
- ແຜນການຂາຍນ້ຳມັນໄບໂອດີເຊວ: ບໍລິສັດມີແຜນທີ່ຈະກະກຽມຂໍ້ສະເໜີທີ່ຄົບຖ້ວນເພື່ອຍື່ນຕໍ່ກະຊວງອຸດສາຫະກຳ ແລະ ການຄ້າເພື່ອຮ້ອງຂໍໂຄຕ້ການນຳເຂົ້ານ້ຳມັນຢ່າງເປັນທາງການ.

ດັ່ງນັ້ນ, ຈຶ່ງເຮັດບົດລາຍງານ ສະບັບນີ້ຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຜູ້ອຳນວຍການໃຫ່ຍ

ທ່ານ ເສດ ພັດທະນະມາດ